**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ ຄຊກລ

ເລກທີ 334 /ຫຄຊກລ.ຄມ

ນະຄອນຫລວງວຽງຈັນ, ວັນທີ ໒໙ ເມສາ ໒໐໒໔

## ບົດບັນທຶກກອງປະຊຸມ

## ວິຊາການກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ລບຕ ປະຈຳໄຕມາດ 1 ປີ 2024

### I ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ

ກອງປະຊຸມວິຊາການກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ລບຕ ປະຈຳໄຕມາດ 1 ປີ 2024 ທີ່ຫ້ອງປະຊຸມຂອງໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ, ຮັກສາການ ຫົວໜ້າຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຫ້ອງການ ຄຊກລ) ແລະ ມີຜູ້ເຂົ້າຮ່ວມຄື: ຊ່ຽວຊານຕາງໜ້າຈາກ ຜູ້ໃຫ້ທຶນ ລັດຖະບານສະຫະລັດອາເມຣິກາ, ອົງການສະຫະປະຊາຊາດ, ຫົວໜ້າໜ່ວຍງານຄຸ້ມຄອງຖານຂໍ້ມູນ, ໜ່ວຍງານຄຸ້ມຄອງການສຳຫຼວດ ແລະ ກວດກູ້, ໜ່ວຍງານຄຸ້ມຄອງການຄຸນນະພາບ, ວິຊາການໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ ແລະ ໜ່ວຍງານໂຄສະນາ ສຶກສາຄວາມສ່ຽງໄພ, ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຫ້ອງການ ຄຊກລ, ວິຊາການ ແລະ ຊ່ຽວຊານຈາກ 09 ອົງການມະນຸດສະທຳ (ໂຄງການເກັບກູ້ລະເບີດແຫ່ງຊາດ, ອົງການເອັນພີເອ, ອົງການຮາໂລທຣັສ, ອົງການແມັກປະຈຳ ສປປ ລາວ, ກອງກວດກູ້ເພື່ອມະນຸດສະທຳກອງທັບ 58, ກົມຂະບວນການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ສະມາຄົມຄົນພິການແຫ່ງຊາດ, ສູນການແພດຟື້ນຟູໜ້າທີ່ການ ) ແລະ ບໍລິສັດມິນເຊີດເກັບກູ້ລະເບີດ , ບໍລິສັດລ້ານຊ້າງເກັບກູ້ລະເບີດ, ບໍລິສັດລາວຮ່ວມໃຈ ເກັບກູ້ລະເບີດ, ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 39 ທ່ານ ເປັນເພດຍິງ 09 ທ່ານ (23 ສ່ວນຮ້ອຍ) ແລະ ຜູ້ພິການ 3 ທ່ານ (7.6 ສ່ວນຮ້ອຍ ຂອງຜູ້ເຂົ້າຮ່ວມທັງໝົດ).

### II ຈຸດປະສົງ

1. ເພື່ອລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດ ກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານໃນ ຂະແໜງການ ລບຕ ປະຈຳໄຕມາດ 1 ພ້ອມທັງນຳສະເໜີ ແຜນໄຕມາດ 2 ປີ 2024;
2. ເພື່ອນຳສະເໜີ Monthly progress report ໃນ ArcGIS online;
3. ເພື່ອລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການ ສ້າງຄວາມອາດສາມາດ ໃນການຄຸ້ມຄອງຂໍ້ມູນຂ່າວສານທີ່ຈັດຕັ້ງປະຕິບັດຮ່ວມກັບອົງການ ເອັນພີເອ;
4. ເພື່ອນຳສະເໜີ ແບບຟອມການເກັບກຳຂໍ້ມູນຜົນສຳເລັດ ທີ່ອອກແບບຢູ່ໂປຣແກັມ Survey 123;
5. ເພື່ອໃຫ້ອົງການປະຕິບັດງານ ນຳສະເໜີ ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ ໃນການລາຍງານຂໍ້ມູນ;
6. ເພື່ອນຳສະເໜີ ຄວາມຄືບໜ້າ ການເຊື່ອມສານບົດບາດຍິງຊາຍ ໃນຂະແໜງການ ລບຕ.

### III ເນື້ອໃນກອງປະຊຸມ

- ສະຫຼຸບ ການເຄື່ອນໄຫວວຽກງານກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານ ແລະ ສະຖິຕິການປະຕິບັດງານ ໃນຂະແໜງການ ລບຕ ສະເພາະໄຕມາດ 1 ປີ 2024

- ຮັບຟັງ ສະຫຼຸບການເຄື່ອນໄຫວວຽກງານກ່ຽວກັບການຄຸ້ມຄອງຂໍ້ມູນຂ່າວສານປະຈຳໄຕມາດ 1 ປີ 2024 ແລະ ແຜນການປະຕິບັດງານ ໄຕມາດ 1 ປີ 2024 ຂອງອົງການປະຕິບັດງານ
- ນຳສະເໜີກ່ຽວກັບ Monthly progress report ໃນ ArcGIS online;
- ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການ ສ້າງຄວາມອາດສາມາດ ໃນການຄຸ້ມຄອງຂໍ້ມູນຂ່າວສານ ທີ່ຈັດຕັ້ງປະຕິບັດຮ່ວມກັບອົງການ ເອັນພີເອ;
- ເພື່ອນຳສະເໜີ ແບບຟອມການເກັບກຳຂໍ້ມູນຜົນສຳເລັດ ທີ່ອອກແບບຢູ່ໂປຣແກັມ Survey 123;
- ເພື່ອໃຫ້ອົງການປະຕິບັດງານ ນຳສະເໜີ ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ ໃນການລາຍງານຂໍ້ມູນ;
- ນຳສະເໜີ ກ່ຽວກັບແບບຟອມການເກັບກຳຂໍ້ມູນການກວດກາຄຸນນະພາບ ໃນໂປຣແກັມ Survey 123 ໂດຍ ຊ່ຽວຊານຈາກອົງການເອັນພີເອ;
- ນຳສະເໜີກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດກ່ຽວກັບການເຊື່ອມສານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ໃນຂະແໜງການ ລບຕ.

## IV. ຂໍ້ສະເໜີ ແລະ ຂໍ້ຕົກລົງ ພາຍໃນກອງປະຊຸມ

- ສະເໜີ ໃຫ້ອົງການປະຕິບັດງານ ສົ່ງແຜນການປະຕິບັດງານ ປີ 2024 ໃຫ້ຫ້ອງການ ຄຊກລ
- ສະເໜີໃຫ້ບໍລິສັດເກັບກູ້ລະເບີດ ລາຍງານການປະຕິບັດງານ ເຂົ້າຖານຂໍ້ມູນແຫ່ງຊາດ. ໃນກໍລະນີທີ່ບໍ່ມີກິດຈະກຳກໍໃຫ້ລາຍງານເຊັ່ນດຽວກັນ, ໃຫ້ນຳໃຊ້ແບບຮ່າງບົດລາຍງານ ແລະ ລະບົບການລາຍງານແບບດຽວກັນໃນຂະແໜງການ ລບຕ
- ສະຖິຕິການກວດກູ້ໃນແຕ່ລະປີ ທີ່ບໍ່ສາມາດບັນລຸຕົວເລກເປົ້າໝາຍສູ້ຊົນ ໃຫ້ສາມາດກວດກູ້ 10,000 ເຮັກຕາຕໍ່ປີ, ອີງຕາມທຶນສະໜັບສະໜູນ ແລະ ສະພາບພູມີປະເທດ ແມ່ນບໍ່ສາມາດບັນລຸໄດ້
- ສະເໜີໃຫ້ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ ຫ້ອງການ ຄຊກລ ໂດຍສົມທົບກັບຊ່ຽວຊານ ສປຊ ວິເຄາະຂໍ້ມູນການກວດກູ້ ອີງຕາມທີມກວດກູ້, ບໍ່ໃຫ້ວິເຄາະຕາມຈຳນວນພະນັກງານທັງໝົດ.
- ສະເໜີໃຫ້ ຄກລ ລົງໄປຈັດຕັ້ງປະຕິບັດກິດຈະກຳການໂຄສະນາສຶກສາຄວາມສ່ຽງໄພ ແລະ ຮີບຮ້ອນສ້າງແຜນລົງໄປກວດກູ້ ຢູ່ບ້ານທີ່ພົບເຫັນລະເບີດ ຢູ່ແຂວງອັດຕະປື.
- ອົງການປະຕິບັດງານ ສະເໜີເຂົ້າຮ່ວມການຝຶກອົບຮົມການນຳໃຊ້ການລາຍງານແບບອອນລາຍ (Survey 123 ແລະ ArcGIS online)
- ຄກລ ສະເໜີໃຫ້ເພີ່ມທະວີເລື່ອງການປະສານງານ ລະຫວ່າງ ຫ້ອງການ ຄຊກລ ແລະ ຄກລ ໃນການນຳໃຊ້ລະບົບ VPN ເພື່ອລາຍງານຂໍ້ມູນ
- ອົງການແມັກ ສະເໜີໃຫ້ຫ້ອງການ ຄຊກລ ປະສານໄປຫາອຳນາດການປົກຄອງທ້ອງຖິ່ນ ທີ່ຮັບຜິດຊອບກ່ຽວກັບ ລບຕ ໃນກໍລະນີ ທີ່ບ້ານບໍ່ມີກາຈ້ຳ ແລະ ໃຫ້ຈ້ຳຂັ້ນເມືອງ ແຕ່ວ່າສິ່ງທ້າທາຍແມ່ນໄລຍະການໂອນຖ່າຍການຈັດຕັ້ງ ຂອງ ຄຊກລ
- ບົດລາຍງານ Monthly progress report ໃນ ArcGIS online ບໍ່ສາມາດ ເປີດ PDF ທີ່ຄັດຕິດມາກັບບົດລາຍງານໄດ້. ສະເໜີຫ້ອງການ ຄຊກລ ປັບປຸງ.
- ຫ້ອງການ ຄຊກລ ສະເໜີໃຫ້ຊ່ຽວຊານອົງການເອັນພີເອ ມານຳສະເໜີກ່ຽວກັບແບບຟອມການເກັບກຳຂໍ້ມູນການກວດກາຄຸນນະພາບ ໃນໂປຣແກັມ Survey 123 ທີ່ຫ້ອງການ ຄຊກລ ອີກເທື່ອໜຶ່ງ.

## V. ສະຫຼຸບ

➢ ເຮົາຈະປະສານງານຄືນກັບ ຄກລ ກ່ຽວກັບການນຳໃຊ້ ລະບົບ VPN ໃນການລາຍງານ

- ຫ້ອງການ ຄຊກລ ຈະຂຶ້ນແຜນ ລົງໄປບໍລິສັດລ້ານຊ້າງ ທີ່ແຂວງສະຫວັນນະເຂດ ເພື່ອສ້າງລະບົບການລາຍງານ
- ອີງຕາມແຜນການຈັດຕັ້ງປະຕິບັດ, ໃນກໍລະນີທີ່ມີການເກັບກໍາຂໍ້ມູນແບບອອນລາຍ ຜ່ານໂປຣແກັມ Survey 123, ຫ້ອງການ ຄຊກລ ຈະມອບ Account ໃຫ້ບັນດາອົງການປະຕິບັດງານ ໂດຍບໍ່ມີຄ່າໃຊ້ຈ່າຍ.
- ຈະສະເໜີກ່ຽວກັບຂໍ້ມູນວິເຄາະໃນແຕ່ລະບ້ານ ແລະ ເລື່ອງກາຈໍ້າ ຈະສະເໜີໃຫ້ພະແນກການຕ່າງປະເທດ ແຂວງ ແລະ ຫ້ອງວ່າການເມືອງ ເພື່ອຈັດຕັ້ງປະຕິບັດ
- ການຝຶກອົບຮົມການນໍາໃຊ້ລະບົບການລາຍງານແບບອອນລາຍ ແມ່ນຈະເພີ່ມກິດຈະກໍານີ້ໃນໄລຍະທີ່ມີການທົບທວນການປະຕິບັດງານຂອງໂຄງການ IM CD

ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມ. ຫຼັງຈາກນັ້ນ, ທ່ານໄດ້ກ່າວຄໍາຂອບໃຈບັນດາຜູ້ແທນທີ່ເສຍສະຫຼະເວລາ ເຂົ້າຮ່ວມກອງປະຊຸມວິຊາການຄັ້ງນີ້ ພ້ອມທັງອວຍພອນໃຫ້ບັນດາຜູ້ແທນຈາກອົງການປະຕິບັດງານ ລບຕ ມີສຸຂະພາບເຂັ້ມແຂງ, ພາລະນາໄມສິນບຸນ ແລະ ກ່າວປິດກອງປະຊຸມ.

ກອງປະຊຸມໄດ້ປິດລົງໃນເວລາ 16:00 ໂມງ ຂອງວັນທີ 13 ມີນາ 2024.

| ປະທານກອງປະຊຸມ | ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ |
|---|---|
| ຫ້ອງການ ຄຊກລ | |
| ບຸນເພັງ ສີສະຫວັດ | |